ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະປ່າໄມ້ ເລກທີ 0002/ກປ
ນະຄອນຫຼວງວຽງຈັນ, ວັນທີ 02 JAN 2014

# ຂໍ້ຕົກລົງ

## ຂອງລັດຖະມົນຕີ

## ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງຄະນະກຳມະການຄຸ້ມຄອງ ລະບົບຄຸນນະພາບ ແລະຢັ້ງຢືນມາດຕະຖານການຜະລິດກະສິກຳສະອາດ

- ອີງຕາມກົດໝາຍວ່າດ້ວຍກະສິກຳ ເລກທີ 01/98 ສພຊ, ລົງວັນທີ 10 ຕຸລາ 1998;
- ອີງຕາມກົດໝາຍວ່າດ້ວຍມາດຕະຖານ ເລກທີ 13/ສພຊ, ລົງວັນທີ 26 ທັນວາ 2007;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ເລກທີ 262/ນຍ, ລົງວັນທີ 28 ມິຖຸນາ 2012 ວ່າດ້ວຍການຈັດຕັ້ງ ແລະເຄື່ອນໄຫວຂອງກະຊວງກະສິກຳ ແລະປ່າໄມ້;
- ອີງຕາມໜັງສືສະເໜີຂອງກົມປູກຝັງ ເລກທີ 1452/ກປຝ, ລົງວັນທີ 02 ຕຸລາ 2013.

## ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງທາງດ້ານນິຕິກຳ ໃຫ້ແກ່ການຈັດຕັ້ງ ແລະການເຄື່ອນໄຫວຂອງຄະນະກຳມະການຄຸ້ມຄອງລະບົບຄຸນນະພາບ ແລະການຢັ້ງຢືນມາດຕະຖານການຜະລິດກະສິກຳສະອາດຂອງ ສປປ ລາວ ແນໃສ່ຄຸ້ມຄອງ ແລະກວດກາຄຸນນະພາບຂອງການຜະລິດກະສິກຳ ໃຫ້ສອດຄ່ອງກັບມາດຕະຖານສາກົນ ຫຼື ISO/IEC 17065, ຮັບປະກັນຄວາມໂປ່ງໃສ ແລະຄວາມປອດໄພຂອງຜູ້ບໍລິໂພກ ທັງສອດຄ່ອງກັບລະບຽບກົດໝາຍ, ສັນຍາ ແລະສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

**ມາດຕາ 2 ທີ່ຕັ້ງ ແລະພາລະບົດບາດ**

ຄະນະກຳມະການຄຸ້ມຄອງລະບົບຄຸນນະພາບ ແລະຢັ້ງຢືນມາດຕະຖານການຜະລິດກະສິກຳສະອາດ ແລະ ຂຽນເປັນອັກສອນຫຍໍ້ວ່າ **"ກຄຄ"** ແມ່ນການ ຈັດຕັ້ງທີ່ບໍ່ປະຈຳການ ຊຶ່ງປະກອບດ້ວຍຕົວແທນທີ່ກ່ຽວຂ້ອງຂອງພາກລັດ ແລະເອກະຊົນ ໂດຍມີພະແນກມາດຕະຖານ ຂອງກົມປູກຝັງເປັນກອງເລຂາ, ມີພາລະບົດບາດໃນການຄົ້ນຄວ້າສ້າງນະໂຍບາຍ ກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດ

ກາຄຸນນະພາບ ແລະການຢັ້ງຢືນມາດຕະຖານກະສິ ກຳສະອາດ ເພື່ອນຳສະເໜີກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາຮັບຮອງຕາມລະບຽບການ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ອົງການມາດຕະຖານສາກົນ** (International Standard Organization - ISO) ໝາຍເຖິງ ອົງການທີ່ສ້າງມາດຕະຖານສາກົນ;
2. **ມາດຕະຖານສາກົນ** ໝາຍເຖິງ ມາດຕະຖານທີ່ຖືກຮັບຮອງ ໂດຍອົງການມາດຕະຖານສາກົນ ແລະສາມາດໃຫ້ສາທາລະນະຊົນເຂົ້າເຖິງໄດ້;
3. **ຜູ້ຈັດການຄຸນນະພາບ** (Quality Management Representative - QMR) ໝາຍເຖິງ ບຸກຄົນທີ່ເຮັດໜ້າທີ່ໃນການຈັດການດ້ານຄຸນນະພາບ;
4. **ຄະນະກຳມະການຮັກສາຄວາມໂປ່ງໃສ** (Impartial Committee) ໝາຍເຖິງ ຄະນະກຳມະການຮັກສາຄວາມໂປ່ງໃສຂອງໜ່ວຍງານຢັ້ງຢືນ;
5. **ຄະນະພິຈາລະນາອອກໃບຢັ້ງຢືນ** (Certification Committee) ໝາຍເຖິງ ຄະນະທີ່ເຮັດໜ້າທີ່ຄົ້ນຄວ້າ ແລະພິຈາລະນາ ອອກໃບຢັ້ງຢືນ;
6. **ຜູ້ກວດກາພາຍໃນ** (Internal Audit) ໝາຍເຖິງ ບຸກຄົນທີ່ເຮັດໜ້າທີ່ກວດກາການປະຕິບັດວຽກງານຂອງອົງກອນທັງໝົດ;
7. **ໜ່ວຍງານຢັ້ງຢືນ** (Laos Certification Body - LCB) ໝາຍເຖິງ ໜ່ວຍງານທີ່ເຮັດໜ້າທີ່ໃນການກວດກາພາກສະໜາມ ແລະເຮັດບົດລາຍງານໃຫ້ແກ່ຄະນະພິຈາລະນາ ອອກໃບຢັ້ງຢືນ ຊຶ່ງຂຶ້ນກັບພະແນກມາດຕະຖານ, ກົມປູກຝັງ;
8. **ຄະນະທົບທວນເອກະສານ** (Documentation Review Committee) ໝາຍເຖິງ ຄະນະກຳມະການ ທີ່ເຮັດໜ້າທີ່ໃນການທົບທວນເອກະສານ ແລະການຈັດຕັ້ງປະຕິບັດ ຂອງໜ່ວຍງານຢັ້ງຢືນ;
9. **ມາດຕະຖານສາກົນ ISO/IEC 17065** ໝາຍເຖິງ ມາດຕະຖານສາກົນ ສຳລັບເປັນຄູ່ມືໃນການກຳນົດເງື່ອນໄຂຄວາມສອດຄ່ອງຂອງໜ່ວຍງານອອກໃບຢັ້ງຢືນທີ່ໃຫ້ການຢັ້ງຢືນ ສຳລັບຜະລິດຕະພັນ, ຂະບວນການ ແລະການບໍລິການ;
10. **ມາດຕະຖານການຜະລິດກະສິກຳສະອາດ** ໝາຍເຖິງ ຂະບວນການຜະລິດກະສິກຳທີ່ຖືກຕ້ອງຕາມມາດຕະຖານການຜະລິດກະສິກຳອິນຊີ ຫຼືກະສິກຳສະອາດ.

## ໝວດທີ 2
## ໜ້າທີ່ ແລະຂອບເຂດສິດ

**ມາດຕາ 4 ໜ້າທີ່**

1. ຄົ້ນຄວ້າ ສ້າງ ແລະນຳສະເໜີ ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການແລະນິຕິກຳຕ່າງໆ ກ່ຽວກັບການຄຸ້ມຄອງລະບົບຄຸນນະພາບ ແລະການຢັ້ງຢືນມາດຕະຖານການຜະລິດກະສິກຳສະອາດຂອງ ສປປ ລາວ ເພື່ອໃຫ້ແທດເໝາະກັບລະບຽບການພາຍໃນ, ສັນຍາ ແລະສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີ;
2. ຄົ້ນຄ້ວາ ກຳນົດຜະລິດຕະພັນ ແລະປະເພດສິນຄ້າກະສິກຳສະອາດ ທີ່ເປັນບູລິມະສິດເພື່ອສະເໜີກະຊວງກະສິກຳ ແລະ ປ່າໄມ້ ຮັບຮູ້ຢ່າງເປັນທາງການ;